ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

VIENTIANE CENTER ວຽງຈັນເຊັ້ນເຕີ

ເລກທີ: 011 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 19 MAR 2024

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື

ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ ທີ່ນັບຖື

ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ທີ່ນັບຖື

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນ ສະພາບໍລິຫານຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ ຄັ້ງທີ 1 ປະຈຳປີ 2024

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມສາມັນ ສະພາບໍລິຫານ ຄັ້ງທີ 1 ປະຈຳປີ 2024 ໃນວັນທີ 19 ມີນາ 2024, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ມະຕິ: ຕົກລົງເຫັນດີມອບໝາຍໃຫ້ ບໍລິສັດ ພັດທະນາສູນເສດຖະກິດການຄ້າຄົບວົງຈອນໝອງຈັນຕອນເໜືອ ຈຳກັດ ເປັນຜູ້ຮັບຜິດຊອບການຊອກຫາລູກຄ້າ ແລະ ບໍລິຫານຊັບສິນຕ່າງໆ ເຊັ່ນ: ຮ້ານຂາຍເຄື່ອງ; ພື້ນທີ່ຈັດງານ; ພື້ນທີ່ໂຄສະນາ ແລະ ສຳນັກງານຫ້ອງການພາຍໃຕ້ກຳມະສິດຂອງ ວຈຊຕ, ຄ່າບໍລິການທັງໝົດຈະບໍ່ເກີນຈຳນວນເງິນທີ່ຢູ່ໃນຂອບເຂດສິດອຳນາດຂອງສະພາບໍລິຫານ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຮັບຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ປະທານສະພາບໍລິຫານ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

He Jun

ຖະໜົນຄຸວຽງ, ບ້ານໝອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ,ໂທ ແລະ ແຟັກ (+856)21 228299